ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 02 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 19 ມິຖຸນາ 2024

# ບົດບັນທຶກກອງປະຊຸມ
# ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປະຈຳປີ 2024

ກອງປະຊຸມຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ I ປະຈຳປີ 2024 ໄດ້ຈັດຂຶ້ນໃນຕອນເຊົ້າ ເວລາ 08:30 ໂມງ ຂອງວັນຈັນ ວັນທີ 03 ມິຖຸນາ 2024, ທີ່ຫ້ອງປະຊຸມດອກຄູນ ຊັ້ນ V ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຮອງປະທານ ຄຄຊ ຜູ້ປະຈຳການ. ເຂົ້າຮ່ວມກອງປະຊຸມຄັ້ງນີ້ປະກອບມີ: ຄະນະ ຄຄຊ, ສຄຄຊ, ຕາງໜ້າຈາກກະຊວງກ່ຽວຂ້ອງ ແລະ ຕະຫຼາດຫຼັກຊັບລາວ (ຕລຊລ) ລວມທັງໝົດ 29 ທ່ານ (ລາຍຊື່ຜູ້ເຂົ້າຮ່ວມໄດ້ຄັດຕິດມາພ້ອມນີ້).

ກອງປະຊຸມ ໄດ້ຮັບຊາບຄວາມຄືບໜ້າ ກ່ຽວກັບຜົນສຳເລັດຫຼາຍດ້ານ ໃນການຈັດຕັ້ງປະຕິບັດ ມະຕິກອງປະຊຸມຄົບຄະນະຂອງ ຄຄຊ ຄັ້ງທີ II ປະຈຳປີ 2023, ຮັບຊາບຜົນການເຄື່ອນໄຫວວຽກງານປະຈຳປີ 2023, ໄຕມາດ I ປີ 2024 ແລະ ເຫັນດີຕໍ່ທິດທາງແຜນການ ປີ 2024 ຂອງ ສຄຄຊ ແລະ ຕລຊລ ແລະ ຮັບຮອງແຜນການປັບປຸງການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS). ເພື່ອສືບຕໍ່ຈັດຕັ້ງວຽກງານໃຫ້ມີຜົນສຳເລັດຍິ່ງຂຶ້ນ ຜ່ານການປຶກສາຫາລື ທ່ານປະທານໄດ້ມອບໝາຍໃຫ້ ສຄຄຊ ແລະ ຕລຊລ ສືບຕໍ່ປະຕິບັດວຽກງານທີ່ຍັງຄົງຄ້າງໃຫ້ສຳເລັດ ດັ່ງນີ້:

❖ ສຄຄຊ

1. ມອບໃຫ້ ສຄຄຊ ປະສານສົມທົບ ພາກສ່ວນກ່ຽວຂ້ອງ ເພື່ອກະກຽມແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າປະເມີນຮອບດ້ານວຽກງານພັດທະນາຕະຫຼາດທຶນ ແລະ ທົບທວນປັບປຸງຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ເພື່ອກຳນົດທິດທາງ ແລະ ປັບປຸງຮອບດ້ານວຽກງານຕະຫຼາດທຶນ ໂດຍໃຫ້ສຳເລັດພາຍໃນປີ 2024;
2. ມອບໃຫ້ ສຄຄຊ ຄົ້ນຄວ້າຮ່າງໜັງສືສະເໜີ ຫາ ທ່ານ ລັດຖະມົນຕີ ກະຊວງການເງິນ ເພື່ອພິຈາລະນາການຮັບຮອງຄຳແນະນຳມາດຕະຖານສາກົນດ້ານການບັນຊີ (IAS) ຈຳນວນ 21 ມາດຕະຖານ ເພື່ອເປັນບ່ອນອີງໃຫ້ແກ່ວິສາຫະກິດໃນການຈັດຕັ້ງປະຕິບັດ ການຂ້າມຜ່ານໄປສູ່ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຢູ່ ສປປ ລາວ;
3. ມອບໃຫ້ ສຄຄຊ ສືບຕໍ່ຄົ້ນຄວ້າການສ້າງກະດານຮອງ ຢູ່ ຕລຊລ ເປັນຕົ້ນ ການປັບປຸງ ແລະ ຄົ້ນຄວ້າລົງເລິກໃນບົດວິພາກເສດຖະກິດການສ້າງກະດານຮອງ;
4. ມອບໃຫ້ ສຄຄຊ ສົມທົບ ກະຊວງການເງິນ ແລະ ຄະນະປະຕິຮູບລັດວິສາຫະກິດ ສືບຕໍ່ຄົ້ນຄວ້າການຫັນ ຫຼື ປະຕິຮູບລັດວິສາຫະກິດ ຜ່ານກົນໄກຕະຫຼາດທຶນ;

5. ມອບໃຫ້ ສຄຄຊ ສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າຄວາມເປັນໄປໄດ້ໃນການກຳນົດມາດຖານເງື່ອນໄຂຂອງວິສາຫະກິດທີ່ຈະໄດ້ຮັບການສຳປະທານໂຄງການຂອງລັດ ຄວນເປັນບໍລິສັດມະຫາຊົນ;
6. ມອບໃຫ້ ສຄຄຊ ສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າ ແລະ ປຶກສາຫາລື ເພື່ອອອກແຈ້ງການ ຫຼື ນິຕິກຳ ໃນການຜັນຂະຫຍາຍກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 180 ວັກທີ 2 ເພື່ອໃຫ້ບໍລິສັດມະຫາຊົນ ທີ່ມີຈຳນວນຜູ້ຖືຮຸ້ນເຫຼືອໜ້ອຍກວ່າ ສາມຄົນ ແລະ/ຫຼື ບໍ່ມີຈຸດປະສົງລະດົມທຶນຜ່ານຕະຫຼາດທຶນ ດຳເນີນການປ່ຽນແປງຮູບແບບເປັນບໍລິສັດ; ນອກຈາກນັ້ນ, ຄົ້ນຄວ້າສະເໜີຄວາມເປັນໄປໄດ້ໃນການລະດົມທຶນ ໂຄງການ ເກືອກາລີ ເຂົ້າຕະຫຼາດຫຼັກຊັບລາວ;
7. ມອບໃຫ້ ສຄຄຊ ສືບຕໍ່ຄົ້ນຄວ້າທົບທວນຄືນບັນດານິຕິກຳ ທີ່ຕິດພັນການອະນຸຍາດໃຫ້ບໍລິສັດຢູ່ ສປປ ລາວ ສາມາດໄປລະດົມທຶນຢູ່ຕ່າງປະເທດ;
8. ມອບໃຫ້ ສຄຄຊ ສືບຕໍ່ຄົ້ນຄວ້າກ່ຽວກັບຜະລິດຕະພັນໃໝ່ ໃຫ້ເຫັນໄດ້ຮູບແບບທີ່ເໝາະສົມສຳລັບ ສປປ ລາວ, ເຫັນໄດ້ຜົນໄດ້ຮັບ ແລະ ຄວາມສ່ຽງຕ່າງໆໃນອະນາຄົດ ກ່ຽວກັບ ກອງທຶນເພື່ອການລົງທຶນຮ່ວມທຸລະກິດ (Venture Capital: VC) ແລະ ກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund: PE Fund) ຈາກນັ້ນ ຈຶ່ງຄົ້ນຄວ້າຮ່າງນິຕິກຳ;
9. ມອບໃຫ້ ສຄຄຊ ສືບຕໍ່ຊຸກຍູ້ວິສາຫະກິດທີ່ມີທ່າແຮງ ໃຫ້ສາມາດຄົ້ນຄວ້າສະເໜີອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ ຢູ່ ຕະຫຼາດຫຼັກຊັບລາວ ພ້ອມນີ້ ການຈັດຕັ້ງປະຕິບັດຕົວຈິງ ສຄຄຊ ຈະຕ້ອງປະສານສົມທົບກັບ ພາກສ່ວນຮັບຜິດຊອບ ວຽກງານຄຸ້ມຄອງໜີ້ສິນຕ່າງປະເທດ ຂອງ ສປປ ລາວ;
10. ມອບໃຫ້ ສຄຄຊ ຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນ ທີ່ລະດົມຈາກການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ;
11. ມອບໃຫ້ ສຄຄຊ ສືບຕໍ່ຊຸກຍູ້ການພັດທະນາລະບົບຊື້ຂາຍຮຸ້ນຜ່ານມືຖື (Mobile Trading System) ເພື່ອໃຫ້ຜູ້ລົງທຶນເຂົ້າເຖິງບໍລິການຕະຫຼາດທຶນໄດ້ຄ່ອງຕົວຂຶ້ນ;
12. ເຫັນດີອະນຸຍາດໃຫ້ ສຄຄຊ ຈັດກອງປະຊຸມຮ່ວມກັບກົມກ່ຽວຂ້ອງທີ່ເປັນຈຸດໃຈກາງປະສານງານວຽກງານຕະຫຼາດທຶນ ໃນການຄົ້ນຄວ້າປະກອບຄຳເຫັນຕໍ່ຮ່າງນິຕິກຳ ຂອງ ຄຄຊ ໂດຍໃຫ້ຜ່ານ ທ່ານ ຮອງຜູ້ວ່າການ ທຫລ, ກຳມະການ ຄຄຊ ໃນແຕ່ລະຄັ້ງ;
13. ເຫັນດີອະນຸຍາດໃຫ້ ສຄຄຊ ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືສອງຝ່າຍ (MOU) ກັບ ສະຖາບັນການເຕີບໂຕສີຂຽວສາກົນ (Global Green Growth Institute (GGGI));
14. ມອບໃຫ້ ສຄຄຊ ແລະ ຕລຊລ ຄົ້ນຄວ້າຂະຫຍາຍຖານຜູ້ລົງທຶນ ໂດຍສະເພາະຜູ້ລົງທຶນປະເພດສະຖາບັນເປັນຕົ້ນ: ບໍລິສັດປະກັນໄພ.

❖ **ຕະຫຼາດຫຼັກຊັບລາວ:**

1. ມອບໃຫ້ ຕລຊລ ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າປະເມີນຄືນ ກ່ຽວກັບຜົນການດຳເນີນງານຂອງ ຕລຊລ ໃນໄລຍະຜ່ານມາ ແລະ ການກຳນົດທິດທາງໃນຕໍ່ໜ້າ ເພື່ອສ້າງຄວາມເຂັ້ມແຂງໃຫ້ ຕລຊລ.

ກອງປະຊຸມໄດ້ດຳເນີນມາເຖິງເວລາ 11:30 ໂມງ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

| | |
|---|---|
| **ປະທານກອງປະຊຸມ** | **ຜູ້ບັນທຶກກອງປະຊຸມ** |
| ບຸນເຫຼືອ ສິນໄຊວໍຣະວົງ | ພອງຈິນດາ ແສງສຸລິວົງ |

ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກໍາມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2024

ເວລາ 8:30 ໂມງ, ວັນທີ 03 ມິຖຸນາ 2024 ທີ່ ຫ້ອງປະຊຸມ "ຫ້ອງດອກຄູນ" ຊັ້ນ V
ທີ່ສໍານັກງານ ຄະນະກໍາມະການຄຸ້ມຄອງຫຼັກຊັບ

| ລໍາດັບ | ຊື່ ແລະ ນາມສະກຸນ | ຕໍາແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| 1 | ທ່ານ ບຸນເຫຼືອ ສິນໄຊວໍຣະວົງ | ຜູ້ວ່າການ ທຫລ,<br>ຮອງປະທານ ຄຄຊ<br>ຜູ້ປະຈໍາການ | ທະນາຄານແຫ່ງ ສປປ ລາວ | |
| 2 | ທ່ານ ປອ. ພຸທະນູເຜັດ ໄຊສົມບັດ | ຮອງລັດຖະມົນຕີ,<br>ຮອງປະທານ ຄຄຊ | ກະຊວງການເງິນ | |
| 3 | [illegible] | [illegible] | ສໍານັກງານ ນາຍົກລັດຖະມົນຕີ | |
| 4 | ທ່ານ ພົນຕີ ສົມວັນ ສາຍລ້ອງພາ | ຮອງລັດຖະມົນຕີ,<br>ກໍາມະການ ຄຄຊ | ກະຊວງປ້ອງກັນ ຄວາມສະຫງົບ | |
| 5 | ທ່ານ ເກດສະໜາ ພົມມະຈັນ | ຮອງລັດຖະມົນຕີ,<br>ກໍາມະການ ຄຄຊ | ກະຊວງຍຸຕິທໍາ | |
| 6 | ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ | ຮອງຜູ້ວ່າການ,<br>ກໍາມະການ ຄຄຊ | ທະນາຄານແຫ່ງ ສປປ ລາວ | |

ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2024

ເວລາ 8:30 ໂມງ, ວັນທີ 03 ມິຖຸນາ 2024 ທີ່ ຫ້ອງປະຊຸມ "ຫ້ອງດອກຄູນ" ຊັ້ນ V
ທີ່ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| 7 | ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ | ຮອງລັດຖະມົນຕີ, ກຳມະການ ຄຄຊ | ກະຊວງແຜນການ ແລະ ການລົງທຶນ | |
| 8 | ທ່ານ ປອ. ມະໂນທອງ ວົງໄຊ | ຮອງລັດຖະມົນຕີ, ກຳມະການ ຄຄຊ | ກະຊວງອຸດສາຫະກຳ ແລະ ການຄ້າ | [signature] |
| 9 | ທ່ານ ນ. ພອນເພັດ ອຸ່ນແກ້ວ | ຮອງຫົວໜ້າ, ກຳມະການ ຄຄຊ | ອົງການໄອຍະການ ປະຊາຊົນສູງສຸດ | |
| 10 | ທ່ານ ນ. ຟອງຈັນດາ ແສງສຸລິວົງ | ຫົວໜ້າ ສຳນັກງານ ຄຄຊ, ເລຂາ ຄຄຊ | ສຳນັກງານ ຄຄຊ | [signature] |
| 11 | ທ່ານ ໄພທູນ ທ່ຽງລະໄມ | ວ່າການຫົວໜ້າກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ | ກະຊວງການເງິນ | [signature] |
| 12 | ທ່ານ ສຸພັນ ວິລະວົງ | ຮອງຫົວໜ້າກົມສ່ວຍສາອາກອນ | ກະຊວງການເງິນ | [signature] |

ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2024

ເວລາ 8:30 ໂມງ, ວັນທີ 03 ມິຖຸນາ 2024 ທີ່ ຫ້ອງປະຊຸມ "ຫ້ອງດອກຄູນ" ຊັ້ນ V
ທີ່ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| ຄະນະກຳມະການ 4 ທ່ານ: | | | | |
| 13 | ທ່ານ ນາງ ນະຄອນສີ ມະໂນທັມ | ຫົວໜ້າກົມບັນຊີແລະການເງິນ ທຫລ, ປະທານສະພາບໍລິຫານ ຕລຊລ | ທະນາຄານແຫ່ງ ສປປ ລາວ | M.Naimmet |
| 14 | ທ່ານ ສຸພັກ ຖິ່ນໄຊພອນ | ຜູ້ອຳນວຍການໃຫຍ່ | ຕະຫຼາດຫຼັກຊັບລາວ | [signature] |
| 15 | ທ່ານ ສຽວສະຫວາດ ທີລະກຸນ | ຮອງຫົວໜ້າສຳນັກງານ ຄຄຊ | ສຳນັກງານ ຄຄຊ | [signature] |
| 16 | ທ່ານ ນ. ວຽງດາລີ ສຸພານຸວົງ | ຮອງຫົວໜ້າສຳນັກງານ ຄຄຊ | ສຳນັກງານ ຄຄຊ | [signature] |
| 17 | ທ່ານ ເອກະລາດ ສີສານ | ຮອງຫົວໜ້າສຳນັກງານ ຄຄຊ | ສຳນັກງານ ຄຄຊ | [signature] |

**ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2024**

ເວລາ 8:30 ໂມງ, ວັນທີ 03 ມິຖຸນາ 2024 ທີ່ ຫ້ອງປະຊຸມ "ຫ້ອງດອກຄູນ" ຊັ້ນ V
ທີ່ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| | | ຄະນະພະແນກ 7 ທ່ານ: | | |
| 18 | ທ່ານ ບຸນຈິງ ກອງຄຳ | ຫົວໜ້າພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ | ສຳນັກງານ ຄຄຊ | |
| 19 | ທ່ານ ບົວລຳພູ ຄຳມະນີວົງ | ຫົວໜ້າພະແນກນິຕິກຳ | ສຳນັກງານ ຄຄຊ | |
| 20 | ທ່ານ ວັນນະສັກ ກອງວົງສາ | ຫົວໜ້າພະແນກຫ້ອງການຄຸ້ມຄອງ ແລະ ບໍລິຫານ | ຕະຫຼາດຫຼັກຊັບລາວ | |
| 21 | ທ່ານ ວິລະເດດ ທອງວັນຄຳ | ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ | ສຳນັກງານ ຄຄຊ | |
| 22 | ທ່ານ ນ. ອາລຸນນາ ສີວົງທອງ | ຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |
| 23 | ທ່ານ ນາງ ສຸດສະດາ ຕື່ນທອງໃສ | ຫົວໜ້າພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ | ສຳນັກງານ ຄຄຊ | |
| 24 | ທ່ານ ນາງ ຈິນດາວັນ ພົມມະບຸດ | ວ່າການຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ | ສຳນັກງານ ຄຄຊ | |
| | | ເລຂາການນຳ 2 ທ່ານ: | | |
| 25 | ທ່ານ ຕຸງເອ ສີບວນຈັນ | ເລຂາຮອງປະທານ ຄຄຊ | ທະນາຄານແຫ່ງ ສປປ ລາວ | |
| 26 | ທ່ານ ນ. ມະລິຈັນ ຈຽມສີສຸລາດ | ເລຂາຮອງຜູ້ວ່າການ ທຫລ | ທະນາຄານແຫ່ງ ສປປ ລາວ | |

## ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2024

ເວລາ 8:30 ໂມງ, ວັນທີ 03 ມິຖຸນາ 2024 ທີ່ ຫ້ອງປະຊຸມ "ຫ້ອງດອກຄູນ" ຊັ້ນ V
ທີ່ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ລາຍເຊັນ |
|---|---|---|---|---|
| | **ຜູ້ຊ່ວຍວຽກກອງປະຊຸມ 2 ທ່ານ:** | | | |
| 27 | ທ່ານ ສຸລິວັນ ຈັນທະວົງ | ຮອງຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |
| 28 | ທ່ານ ນາງ ປິວພິມ ອິງຮັກບຸດ | ຮອງຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |
| | **ຜູ້ບັນທຶກກອງປະຊຸມ 1 ທ່ານ ແລະ ຕິດຕາມມະຕິກອງປະຊຸມ 1 ທ່ານ:** | | | |
| 29 | ທ່ານ ນາງ ສີອຳພອນ ບຸດອາສາ | ວິຊາການພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |
| 30 | ທ່ານ ນາງ ຈິດຕະພອນ ວັນດີໄຊ | ວິຊາການພະແນກຈັດຕັ້ງ ແລະ ບໍລິຫານ | ສຳນັກງານ ຄຄຊ | |

| | | | | |
|---|---|---|---|---|
| 1 | ທ່ານ ສຸກສະໄໝ ວັນນະຈັນ | ຊົ່ວຄາວ | ປລປ | |
| 2 | ທ່ານ ສີທອນ ອິງໄຊ | ຮອງພະແນກ | ຂລປ | |
| 3 | | | | |
| 4 | | | | |
| 5 | | | | |